ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງສະຫວັນນະເຂດ
(ເຈົ້າແຂວງ)

ເລກທີ 1608 /ຈຂ.ສຂ
ວັນທີ 25 SEP 2019

# ຄຳສັ່ງ

## ວ່າດ້ວຍການຍຸບເລີກຈຸດກວດກາ ຂອງເຈົ້າໜ້າທີ່ລັດພາຍໃນແຂວງ ສະຫວັນນະເຂດ.

ເຖິງ : ບັນດາ ທ່ານເຈົ້າເມືອງ, ເຈົ້ານະຄອນ ໄກສອນ ພົມວິຫານ, ຫົວໜ້າກອງບັນຊາການ ປກສ - ປກຊ ແຂວງ, ຫົວໜ້າພະແນກການ, ອົງການຈັດຕັ້ງລັດທຸກຂັ້ນໃນທົ່ວແຂວງ ສະຫວັນນະເຂດ.

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ໝວດທີ 4 ມາດຕາ 20.
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018 ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດ ຢູ່ ສປປ ລາວ.
- ອີງຕາມ ບົດບັນທຶກກອງປະຊຸມອົງການປົກຄອງແຂວງ ປະຈຳເດືອນ ສິງຫາ 2019, ສະບັບເລກທີ 1442/ຈຂ.ສຂ, ລົງວັນທີ 30 ສິງຫາ 2019.

ເພື່ອເປັນການເພີ່ມທະວີໃນການຈັດຕັ້ງປະຕິບັດນະໂຍບາຍສາມເປີດຂອງລັດຖະບານໃຫ້ເປັນຮູບປະທຳ ແນ່ໃສ່ສ້າງຄວາມເຊື່ອໝັ້ນ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການດຳເນີນທຸລະກິດ ດ້ວຍການແກ້ໄຂຂັ້ນຕອນຕ່າງໆ ທີ່ເປັນການກີດຂວາງ ແລະ ກີດໜ່ວງຖ່ວງດຶງ,ສົ່ງເສີມການຜະລິດໃຫ້ຂະຫຍາຍຕົວ ແລະ ກາຍເປັນກຳລັງແຮງປະກອບສ່ວນສຳຄັນເຂົ້າໃນການພັດທະນາເສດຖະກິດ - ສັງຄົມຂອງແຂວງ. ຄຽງຄູ່ກັນນັ້ນ ກໍ່ເປັນການຈຳກັດຊ່ອງຫວ່າງໃນການສວຍໃຊ້ໜ້າທີ່ຕຳແໜ່ງເຄື່ອນໄຫວລະເມີດລະບຽບ, ກົດໝາຍຂອງເຈົ້າໜ້າທີ່ລັດ ທັງເປັນການບຸກທະລຸດ້ານຕ່າງໆໃຫ້ມີການຫັນປ່ຽນຢ່າງຕັ້ງໜ້າ.

ເຈົ້າແຂວງສະຫວັນນະເຂດ ອອກຄຳສັ່ງ:

1. ໃຫ້ຍຸບເລີກຈຸດກວດກາຂອງເຈົ້າໜ້າທີ່ຕຳຫຼວດຕາມສາຍທາງເລກ 9 ແລະ ສາຍທາງເລກທີ 13 ຄື: ຈຸດກວດກາເຊບັ້ງຫຽງ (ເມືອງ ສອງຄອນ), ຈຸດກວດກາສາລາກາບປ່າງ (ເມືອງ ພີນ) ແລະ ຈຸດກວດກາ ບ້ານໂນນສົມ (ເມືອງ ໄຊບູລີ) ລວມທັງຈຸດກວດກາອື່ນໆຂອງເຈົ້າໜ້າທີ່ລັດລະຫວ່າງສາຍທາງເມືອງຕໍ່ເມືອງໃນຂອບເຂດທົ່ວແຂວງສະຫວັນນະເຂດ.

ສຳລັບສິ່ງປຸກສ້າງໃນ 3 ຈຸດດັ່ງກ່າວແມ່ນມອບໃຫ້ກອງບັນຊາການ ປກສ ແຂວງນຳໃຊ້ເພື່ອຈຸດປະສົງອື່ນທີ່ເຫັນວ່າເໝາະສົມ.

2. ໃຫ້ຍຸບເລີກຄະນະກຳມະການ ທີ່ຖືກແຕ່ງຕັ້ງຕາມຂໍ້ຕົກລົງສະບັບເລກທີ 523/ຈຂ.ສຂ, ລົງວັນທີ 26 ມິຖຸນາ 2019, ທີ່ປະຈຳຢູ່ຈຸດປະສານງານ ບ້ານດົງສະຫວັນ (ເມືອງ ເຊໂປນ). ສຳລັບຈຸດດັ່ງກ່າວມອບໃຫ້ເຈົ້າໜ້າທີ່ ຕມ ກອງບັນຊາການ ປກສ ແຂວງ ແລະ ເຈົ້າໜ້າທີ່ ພາສີ ກອງດ່ານຄອງພາສີ VI ນຳໃຊ້ເພື່ອປະຕິບັດໜ້າທີ່ວິຊາສະເພາະຕາມພາລະບົດບາດທີ່ໄດ້ກຳນົດໄວ້ໃນລະບຽບ,ກົດໝາຍ.

3. ສຳລັບຈຸດປະສານງານຂອງເຈົ້າໜ້າທີ່ ພາສີ ແລະ ເຈົ້າໜ້າທີ່ ປ່າໄມ້ ທີ່ໄດ້ສ້າງຕັ້ງຜ່ານມາຢູ່ບັນດາເມືອງ ແມ່ນອະນຸຍາດໃຫ້ກວດສະເພາະບັນດາພາຫະນະທີ່ມີເປົ້າໝາຍລະເມີດຕໍ່ລະບຽບກົດໝາຍ ຕາມຂໍ້ມູນແຫຼ່ງຂ່າວທີ່ໜ້າເຊື່ອຖືໄດ້ເທົ່ານັ້ນ, ບໍ່ອະນຸຍາດໃຫ້ກວດກາທົ່ວໄປໂດຍບໍ່ມີເປົ້າໝາຍ. ສຳລັບເຈົ້າໜ້າທີ່ອື່ນຂອງລັດ ຖ້າມີຄວາມຈຳເປັນໃນການກວດກາຕາມວິຊາສະເພາະ ຕ້ອງໄດ້ຮັບອະນຸຍາດຈາກການນຳຂອງແຂວງຈຶ່ງສາມາດປະຕິບັດໄດ້.

4. ການກວດກາຂອງເຈົ້າໜ້າທີ່ຕຳຫຼວດຈະລາຈອນແຂວງຕາມຈຸດຕ່າງໆ, ອະນຸຍາດໃຫ້ກວດສະເພາະບັນດາພາຫະນະທີ່ລະເມີດກົດຈະລາຈອນທີ່ປະກົດຊຶ່ງໜ້າ ຫຼື ກວດຕາມຂໍ້ມູນແຫຼ່ງຂ່າວທີ່ໜ້າເຊື່ອຖືໄດ້ ທີ່ມີການລະເມີດລະບຽບ,ກົດໝາຍ ແລະ ກວດຕາມຄຳສັ່ງຂອງຂັ້ນເທິງ ໂດຍມີການກຳນົດເວລາທີ່ແນ່ນອນ. ສ່ວນເຈົ້າໜ້າທີ່ຕຳຫຼວດຈະລາຈອນເມືອງ, ນະຄອນໄກສອນພົມວິຫານ(ຫ້າມຕັ້ງຈຸດກວດກາຕາມສາຍທາງຫຼວງແຫ່ງຊາດ ແລະ ທາງຫຼວງຂອງແຂວງ), ຍົກເວັ້ນກໍລະນີມີຄຳສັ່ງຈາກຂັ້ນເທິງ).

5. ມອບໃຫ້ບັນດາເມືອງ, ນະຄອນໄກສອນ ພົມວິຫານ, ກຳລັງປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ຂະແໜງການກົມກອງອ້ອມຂ້າງແຂວງນຳເອົາເນື້ອໃນຈິດໃຈຂອງຄຳສັ່ງສະບັບນີ້ໄປຈັດຕັ້ງເຜີຍແຜ່ ແລະ ເຊື່ອມຊຶມໃຫ້ແກ່ເຈົ້າໜ້າທີ່, ພະນັກງານໃນຂອບເຂດຄວາມຮັບຜິດຊອບໃຫ້ຮັບຮູ້ຢ່າງກວ້າງຂວາງ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ເຂັ້ມງວດ.

6. ບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 13, ສະມາຊິກສະພາປະຊາຊົນແຂວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ, ບຸກຄົນ, ນິຕິບຸກຄົນ ຊ່ວຍຕິດຕາມ, ກວດກາ ແລະ ສະໜອງຂໍ້ມູນໃຫ້ແກ່ອົງການປົກຄອງແຂວງ.

7. ມອບໃຫ້ອົງການກວດກາລັດແຂວງ ເປັນເຈົ້າການໃນການຕິດຕາມ, ກວດກາການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງທົ່ວເຖິງ ແລະ ພ້ອມທັງລາຍງານໃຫ້ການນຳແຂວງຮັບຊາບເປັນແຕ່ລະໄລຍະ.

8. ການປະຕິບັດຄຳສັ່ງສະບັບນີ້ ແມ່ນເປັນສ່ວນໜຶ່ງຂອງການຕີລາຄາ ແລະ ປະເມີນຜົນໃນການປະຕິບັດໜ້າທີ່ວຽກງານຂອງພະນັກງານນຳພາ-ຄຸ້ມຄອງແຕ່ລະຂັ້ນ, ກໍລະນີເຈົ້າໜ້າທີ່ ຫຼື ພະນັກງານ ຂອງພາກສ່ວນຂະແໜງການ ມີການລະເມີດ ແມ່ນຈະໄດ້ດຳເນີນມາດຕະການທາງວິໄນຕາມຂັ້ນຕອນຂອງລະບຽບ,ກົດໝາຍຢ່າງເຂັ້ມງວດ.

9. ຄຳສັ່ງສະບັບນີ້ປ່ຽນແທນຄຳສັ່ງສະບັບເລກທີ 1892/ຈຂ.ສຂ, ລົງວັນທີ 12 ທັນວາ 2016 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງສະຫວັນນະເຂດ**

ສັນຕິພາບ ພົມວິຫານ